ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ທະນາຄານແຫ່ງ ສປປລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 205
ວັນທີ 24 FEB 2015
ໂທລະສັບ 021 217770

ເລກທີ 165/ທກ

ນະຄອນຫລວງວຽງຈັນ,ວັນທີ 23 FEB 2015

**<u>ແຈ້ງການ</u>**

ເຖິງ: ບັນດາກົມ, ທຽບເທົ່າ, ພະນັກງານ ທະນາຄານແຫ່ງ ສປປ ລາວ, ບັນດາ ທະນາຄານທຸລະກິດລັດ, ຫຸ້ນສ່ວນ ແລະ ເອກະຊົນ.

ເລື່ອງ: ການປະຕິບັດການເຂົ້າ-ອອກ ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ຂໍ້ກຳນົດກ່ຽວກັບການຄຸ້ມຄອງແລະ ນຳໃຊ້ລົດຂອງ ທຫລ ເລກທີ 02/ທຫລ ວັນທີ 27/01/2006;
- ອີງຕາມການປັບປຸງລະບົບກວດກາຕິດຕາມການເຂົ້າ-ອອກຂອງພະນັກງານ ທຫລ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ປັດຈຸບັນ ທຫລ ໄດ້ປັບປຸງລະບົບກວດກາຕິດຕາມການເຂົ້າ-ອອກຂອງພະນັກງານ ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ເຮັດໃຫ້ວຽກງານປ້ອງກັນໃຫ້ມີຄວາມປອດໄພຮອບດ້ານ ເນື່ອງຈາກວ່າປັດຈຸບັນພະນັກງານມີຈຳນວນຫຼາຍ, ເຈົ້າໜ້າທີ່ຕຳຫຼວດທີ່ຕັ້ງມີການສັບຊ້ອນຈັດວາງບ່ອນປະຈຳການຈຶ່ງບໍ່ສາມາດກຳໄດ້ພະນັກງານທັງໝົດ ແລະ ລົດເຂົ້າ-ອອກພາຍໃນ ທຫລ ສະນັ້ນ, ເພື່ອຄວາມສະດວກໃຫ້ແກ່ວຽກງານປ້ອງກັນຄວາມປອດໄພ ຈຶ່ງແຈ້ງມາຍັງທ່ານທີ່ເຂົ້າ-ອອກດ້ວຍພາຫະນະຄວນປະຕິ ບັດດັ່ງນີ້:

1. ລົດໃຫຍ່ກ່ອນຈະເຂົ້າມາໃນ ທຫລ ໃຫ້ຫັນແວ່ນທາງເບື້ອງຂວາຂອງລົດລົງ ເພື່ອໃຫ້ເຈົ້າໜ້າທີ່ສະດວກ ແລະ ກຳໄດ້ໃນການຕິດຕາມວ່າແມ່ນພະນັກງານຂອງ ທຫລ;
2. ສະເພາະລົດຈັກ ພະນັກງານ ທຫລ ແລະ ແຂກມາພົວພັນວຽກທີ່ຂັບຂີ່ລົດຈັກໃຫ້ເປີດແວ່ນໝວກກັນກະທົບຂຶ້ນ ແລະ ຜູ້ທີ່ໃສ່ຜ້າປິດປາກ ກໍ່ໃຫ້ເອົາຜ້າປິດປາກອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ເຊັນແທນຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ອຸດຕະລາ ແກ້ວທາວົງ